# ການສະໜັບສະໜູນແບບຄວບຄຸມເອງ: ຄຳຖາມທີ່ຖາມເລື້ອຍໆ

**(Self-Directed Supports: Frequently Asked Questions)**



ການຄວບຄຸມການບໍລິການຂອງທ່ານເອງ ເປັນທາງເລືອກສຳລັບຄົນທີ່ໄດ້ລົງທະບຽນເຂົ້າໃນບັນດາໂຄງການເບິ່ງແຍງດູແລໄລຍະຍາວຂອງ Wisconsin. ໂຄງການນີ້ມອບຊ່ອງທາງໃຫ້ທ່ານສາມາດຄວບຄຸມການບໍລິການ ແລະ ການຊ່ວຍເຫຼືອທີ່ທ່ານໄດ້ຮັບໄດ້ຫຼາຍຍິ່ງຂຶ້ນ.

ວິທີການນຳໃຊ້ການສະໜັບສະໜູນແບບຄວບຄຸມເອງຂອງທ່ານ ແມ່ນຂຶ້ນຢູ່ກັບວ່າທ່ານໄດ້ລົງທະບຽນເຂົ້າໃນໂຄງການໃດໜຶ່ງຕໍ່ໄປນີ້ ຫຼື ບໍ່:

- ໂຄງການເບິ່ງແຍງດູແລໄລຍະຍາວແບບມີການຄຸ້ມຄອງ:
  - Family Care
  - Partnership
  - PACE (Program of All-Inclusive Care for the Elderly (ໂຄງການການເບິ່ງແຍງດູແລຜູ້ສູງອາຍຸແບບຄົບວົງຈອນ)).
- IRIS (Include, Respect, I Self-Direct (ລວມເຂົ້ານຳ, ເຄົາລົບ, ຂ້ອຍສັ່ງຕົວເອງ))

## ຂ້າພະເຈົ້າສາມາດຄວບຄຸມການບໍລິການດ້ວຍຕົນເອງໄດ້ລັກລາຍການ?

### Family Care, Partnership ຫຼື PACE

ທ່ານສາມາດຄວບຄຸມ **ການບໍລິການບາງສ່ວນຂອງທ່ານ**ດ້ວຍຕົນເອງ. ຕົວຢ່າງ: ທ່ານອາດຈະຄວບຄຸມການບໍລິການເບິ່ງແຍງດູແລສ່ວນບຸກຄົນຂອງທ່ານໄດ້ດ້ວຍຕົນເອງ ແຕ່ໃຫ້ທີມງານເບິ່ງແຍງດູແລຂອງທ່ານຄຸ້ມຄອງບັນດາຜູ້ໃຫ້ບໍລິການທີ່ຊ່ວຍໃຫ້ທ່ານໄດ້ຮັບອຸປະກອນທາງການແພດ.

### IRIS

ທ່ານເປັນຜູ້ຄວບຄຸມ **ການບໍລິການເບິ່ງແຍງດູແລໄລຍະຍາວຂອງທ່ານທັງໝົດ**ດ້ວຍຕົນເອງ. ທ່ານຈະມີ IRIS Consultant Agency (ໜ່ວຍງານທີ່ປຶກສາຂອງ IRIS) ແລະ Fiscal Employer Agent (ຕົວແທນນາຍຈ້າງດ້ານການເງິນ) ແລະ ອື່ນໆ ເພື່ອຊ່ວຍທ່ານຕະຫຼອດເວລາ.

WISCONSIN DEPARTMENT *of* HEALTH SERVICES

P-00088NL (05/2024)

# ຂ້າພະເຈົ້າຈະຕັດສິນໃຈວ່າຂ້າພະເຈົ້າຈະຄວບຄຸມການບໍລິການໃດດ້ວຍຕົນເອງໄດ້ຄືແນວໃດ?

## Family Care, Partnership ຫຼື PACE

ເມື່ອທ່ານລົງທະບຽນ, Managed Care Organization (ອົງກອນການເບິ່ງແຍງດູແລແບບມີການຄຸ້ມຄອງ, MCO) ຈະມອບໝາຍທີມງານເບິ່ງແຍງດູແລໃຫ້ແກ່ທ່ານ. MCO ຂອງທ່ານຈະຊ່ວຍທ່ານຊອກຫາ ແລະ ຮັບການບໍລິການທີ່ທ່ານຕ້ອງການ. ໃນລະຫວ່າງຂັ້ນຕອນການປະເມີນ, ທ່ານຈະເຮັດວຽກຮ່ວມກັບ MCO ຂອງທ່ານ ເພື່ອຕັດສິນໃຈວ່າການບໍລິການໃດທີ່ທ່ານຢາກຈະຄວບຄຸມດ້ວຍຕົນເອງ, ຖ້າມີ.

ຖ້າວ່າທ່ານເລືອກທີ່ຈະຄວບຄຸມການບໍລິການຢ່າງໜ້ອຍໜຶ່ງລາຍການດ້ວຍຕົນເອງ:

1. MCO ຈະໃຫ້ງົບປະມານສໍາລັບທ່ານເພື່ອຈ່າຍຄ່າບໍລິການເຫຼົ່ານີ້.
2. ທ່ານສ້າງແຜນການສະໜັບສະໜູນແບບຄວບຄຸມເອງ ທີ່ກໍານົດວິທີການໃນການຄວບຄຸມການບໍລິການຂອງທ່ານ.
3. MCO ຂອງທ່ານ ຈະຄຸ້ມຄອງການບໍລິການອື່ນໆທີ່ທ່ານບໍ່ໄດ້ຄວບຄຸມເອງ.

## IRIS

ເມື່ອທ່ານລົງທະບຽນ, ທ່ານເລືອກທີ່ປຶກສາ IRIS ໂດຍຜ່ານ IRIS Consultant Agency (ໜ່ວຍງານທີ່ປຶກສາຂອງ IRIS). ພວກເຂົາຈະຊ່ວຍເຫຼືອທ່ານໃນຂະນະທີ່ທ່ານເລືອກການບໍລິການຕ່າງໆ.

1. IRIS Consultant Agency (ໜ່ວຍງານທີ່ປຶກສາຂອງ IRIS) ຂອງທ່ານ ຈະແບ່ງປັນງົບປະມານໂດຍປະມານຂອງທ່ານໃຫ້ແກ່ທ່ານ. ງົບປະມານຂອງທ່ານປະກອບດ້ວຍເງິນທີ່ທ່ານຈະນໍາໃຊ້ເພື່ອສ້າງແຜນ IRIS ຂອງທ່ານ.
2. ທ່ານສ້າງແຜນ IRIS ຂອງທ່ານ. ແຜນນີ້ກໍານົດເປົ້າໝາຍຂອງທ່ານ ແລະ ສິ່ງທີ່ທ່ານຕ້ອງການເພື່ອບັນລຸໃຫ້ໄດ້ເປົ້າໝາຍເຫຼົ່ານັ້ນ. ນອກຈາກນັ້ນ, ກໍຍັງລວມທັງການບໍລິການຕາມບ້ານເຮືອນ ແລະ ຊຸມຊົນ ທີ່ທ່ານຈະໄດ້ຮັບໃນນາມເປັນສ່ວນໜຶ່ງຂອງ IRIS ເພື່ອໃຫ້ບັນລຸເປົ້າໝາຍເຫຼົ່ານັ້ນ.
3. ຖ້າວ່າທ່ານຕ້ອງການຄວາມຊ່ວຍເຫຼືອໃນເລື່ອງວຽກງານການເບິ່ງແຍງດູແລສ່ວນບຸກຄົນ, ທ່ານອາດຈະມີເງື່ອນໄຂໄດ້ຮັບການເບິ່ງແຍງດູແລສ່ວນບຸກຄົນແບບຄວບຄຸມເອງຂອງ IRIS. ການບໍລິການນີ້ແຍກອອກຈາກການບໍລິການອື່ນໆທີ່ທ່ານໄດ້ຮັບຜ່ານ IRIS.
4. ທ່ານອາດສາມາດປັບງົບປະມານ IRIS ຂອງທ່ານໄດ້ ຖ້າມັນບໍ່ພຽງພໍກັບຄ່າໃຊ້ຈ່າຍຂອງການບໍລິການທັງໝົດທີ່ທ່ານຕ້ອງການ. ຖ້າວ່າທ່ານຕ້ອງການເພີ່ມງົບປະມານ, ທີ່ປຶກສາ IRIS ຂອງທ່ານຈະຊ່ວຍໃຫ້ທ່ານໃນການປະກອບເອກະສານທີ່ຈໍາເປັນໃຫ້ສໍາເລັດ ເພື່ອຮ້ອງຂໍເງິນເພີ່ມອີກ.

## ຂ້າພະເຈົ້າສາມາດຈ້າງຜູ້ໃດເພື່ອມາໃຫ້ບໍລິການ?

ສໍາລັບບັນດາໂຄງການທັງໝົດ, ທ່ານສາມາດເລືອກພະນັກງານຂອງທ່ານເອງໄດ້. ບັນດາພະນັກງານນັ້ນອາດເປັນສະມາຊິກໃນຄອບຄົວ ຫຼື ໝູ່ເພື່ອນ ຫຼື ບຸກຄົນອື່ນທີ່ມີຄຸນວຸດທິອື່ນໆ. ບັນດາພະນັກງານທັງໝົດຈໍາເປັນຕ້ອງຜ່ານການກວດສອບປະຫວັດ ແລະ ໄດ້ຮັບການອະນຸມັດກ່ອນທີ່ຜູ້ກ່ຽວຈະສາມາດໄດ້ຮັບຄ່າຈ້າງເພື່ອໃຫ້ການບໍລິການແກ່ທ່ານໄດ້.

## ຂ້າພະເຈົ້າສາມາດວ່າຈ້າງພະນັກງານເພື່ອມາໃຫ້ບໍລິການໄດ້ຄືແນວໃດ?

ສໍາລັບບັນດາໂຄງການທັງໝົດ, ຈະມີຫຼາຍທາງເລືອກສໍາລັບວິທີໃນການໄດ້ຮັບພະນັກງານເພື່ອມາໃຫ້ການຊ່ວຍເຫຼືອແບບຄວບຄຸມເອງຂອງທ່ານ:

- **ທ່ານສາມາດເປັນນາຍຈ້າງໄດ້**—ນີ້ໝາຍຄວາມວ່າທ່ານເປັນຜູ້ຮັບສະໝັກ, ວ່າຈ້າງ, ຝຶກອົບຮົມ ແລະ ຄຸ້ມຄອງພະນັກງານຂອງທ່ານ. ໃນຖານະເປັນນາຍຈ້າງ, ທ່ານຈະເປັນຜູ້ຮັບຜິດຊອບໃນການອະນຸມັດຕາຕະລາງບັນທຶກເວລາ ແລະ ກໍານົດອັດຕາລາຍຊົ່ວໂມງ, ພ້ອມທັງໜ້າວຽກອື່ນໆ.
- **ທ່ານສາມາດເຮັດວຽກກັບບໍລິສັດຕົວແທນໄດ້**—ນີ້ໝາຍຄວາມວ່າມີອີກກຸ່ມໜຶ່ງຈະຄຸ້ມຄອງພະນັກງານທີ່ໃຫ້ການບໍລິການແກ່ທ່ານ.

ຖ້າວ່າທ່ານປະສົບບັນຫາໃນຊອກຫາພະນັກງານ ຫຼື ບໍລິສັດຕົວແທນຕ່າງໆ, MCO ຫຼື ທີ່ປຶກສາ IRIS ຂອງທ່ານ ຈະສາມາດແນະນໍາແຫຼ່ງຊັບພະຍາກອນ ແລະ ຜູ້ໃຫ້ບໍລິການທີ່ອາດຈະເປັນປະໂຫຍດ.

## ການບໍລິການຈະໄດ້ຮັບການຊໍາລະຄືແນວໃດ?

**Family Care, Partnership ຫຼື PACE**

ທ່ານຈະມີ Fiscal Employer Agent (ຕົວແທນນາຍຈ້າງດ້ານການເງິນ). ພວກເຂົາຈະໃຊ້ງົບປະມານຈາກ MCO ຂອງທ່ານ ເພື່ອຈ່າຍຄ່າບໍລິການຕ່າງໆໃນແຜນການສະໜັບສະໜູນແບບຄວບຄຸມເອງຂອງທ່ານ. ທ່ານຕ້ອງໄດ້ໃຫ້ການອະນຸມັດແກ່ການຈ່າຍເງິນ.

**IRIS**

Fiscal Employer Agent (ຕົວແທນນາຍຈ້າງດ້ານການເງິນ) ຂອງ IRIS ຂອງທ່ານຈະຈ່າຍຄ່າຕາຕະລາງບັນທຶກເວລາ ແລະ ຄໍາຮຽກທວງ ສໍາລັບການບໍລິການທີ່ໄດ້ລະບຸໄວ້ໃນແຜນ IRIS ຂອງທ່ານ. ທ່ານຕ້ອງໄດ້ໃຫ້ການອະນຸມັດແກ່ຕາຕະລາງບັນທຶກເວລາ ສໍາລັບບັນດາພະນັກງານທີ່ທ່ານວ່າຈ້າງ.

ທ່ານສາມາດຈ່າຍຄ່າບໍລິການອື່ນໆບາງຢ່າງທີ່ IRIS ບໍ່ໄດ້ຄຸ້ມຄອງໄດ້ດ້ວຍບັດ Medicaid ForwardHealth ຂອງທ່ານ.

**ໝາຍເຫດ:**